**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງທະນາຄານທຸລະກິດ

ເລກທີ: 11 /ກຄທ

ນະຄອນຫຼວງວຽງຈັນ, ວັນທີ: 10 ມັງກອນ 2022

# ຄຳແນະນຳການຈັດຕັ້ງປະຕິບັດມາດຕາ 53 ຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ)

- ອີງຕາມ ກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018.

ກົມຄຸ້ມຄອງທະນາຄານທຸລະກິດ (ກຄທ) ອອກຄຳແນະນຳໃຫ້ບັນດາທະນາຄານທຸລະກິດ ທົ່ວລະບົບ (ລວມທັງສາຂາທະນາຄານທຸລະກິດຕ່າງປະເທດ) ເອົາໃຈໃສ່ຈັດຕັ້ງປະຕິບັດ ມາດຕາ 53 ຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ, ສະບັບເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018 ກ່ຽວກັບການດຳເນີນທຸລະກຳກັບຜູ້ກ່ຽວຂ້ອງ ແລະ ພະນັກງານຂອງທະນາຄານທຸລະກິດ ເພື່ອຮັບປະກັນຄວາມເຂົ້າໃຈເປັນເອກະພາບຂອງທະນາຄານທຸລະກິດ ໃນການຈັດຕັ້ງປະຕິບັດມາດຕາດັ່ງກ່າວ ດັ່ງນີ້:

1. ໃຫ້ທະນາຄານທຸລະກິດປັບປຸງຄູ່ມື ຫຼື ລະບຽບການທີ່ກ່ຽວຂ້ອງຂອງຕົນ ເພື່ອກຳນົດລາຍລະອຽດກ່ຽວກັບເງື່ອນໄຂການເຮັດທຸລະກຳກັບຜູ້ກ່ຽວຂ້ອງ ແລະ ພະນັກງານຂອງທະນາຄານ ເປັນຕົ້ນ ການປະຕິບັດຕໍ່ຜູ້ກ່ຽວຂ້ອງຄືກັບລູກຄ້າທົ່ວໄປ, ການກວດກາຄວາມສອດຄ່ອງຂອງທຸລະກຳດັ່ງກ່າວ ແລະ ການຄ້ຳປະກັນທີ່ເໝາະສົມ;
2. ການປັບປຸງໃນຂໍ້ 1 ຂ້າງເທິງ ຕ້ອງໄດ້ຮັບການຮັບຮອງຈາກສະພາບໍລິຫານຂອງທະນາຄານທຸລະກິດ ຫຼື ພາກສ່ວນທີ່ມີສິດອຳນາດຂອງສຳນັກງານໃຫຍ່ຂອງສາຂາທະນາຄານທຸລະກິດຕ່າງປະເທດ;
3. ໃຫ້ທະນາຄານທຸລະກິດ ສຳເລັດການປັບປຸງໃນຂໍ້ 1 ຂ້າງເທິງພາຍໃນເດືອນ ມິຖຸນາ 2022 ແລ້ວໃຫ້ນຳສົ່ງສຳເນົາສະບັບປັບປຸງດັ່ງກ່າວມາຍັງ ກຄທ ພາຍໃນ ສິບວັນລັດຖະການ ນັບແຕ່ວັນທີ່ສະພາບໍລິຫານໄດ້ຮັບຮອງເອົາການປັບປຸງດັ່ງກ່າວ;
4. ໃຫ້ທະນາຄານທຸລະກິດລາຍງານທຸລະກຳກັບຜູ້ກ່ຽວຂ້ອງ ແລະ ພະນັກງານຂອງທະນາຄານ ຕາມມາດຕາ 53 ຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ, ສະບັບເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018 ຕາມແບບຟອມທີ່ ກຄທ ກຳນົດ ຕາມແຈ້ງການສະເພາະໃນແຕ່ລະໄລຍະ.

ດັ່ງນັ້ນ, ຈຶ່ງອອກຄຳແນະນຳສະບັບນີ້ມາຍັງທ່ານ ເພື່ອຈັດຕັ້ງປະຕິບັດໃຫ້ສອດຄ່ອງ.

**ຫົວໜ້າກົມ**

ທະນາຄານແຫ່ງ ສ. ປ. ປ. ລາວ

ກົມຄຸ້ມຄອງທະນາຄານທຸລະກິດ

**ອາລຸນ ບຸນຍົງ**